ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 034 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 30.01.2015

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ການຄຸ້ມຄອງເງິນຕາຕ່າງປະເທດ

---

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 014/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 06/ຄປຈ, ລົງວັນທີ 22 ມັງກອນ 2015.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :**

**ມາດຕາ 1.** ປະກາດໃຊ້ກົດໝາຍວ່າດ້ວຍ ການຄຸ້ມຄອງເງິນຕາຕ່າງປະເທດ.

**ມາດຕາ 2.** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ                                                                                    ເລກທີ 014 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍ ການຄຸ້ມຄອງເງິນຕາຕ່າງປະເທດ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງ ສະພາແຫ່ງຊາດ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການຄຸ້ມຄອງເງິນຕາຕ່າງປະເທດ ໃນວາລະກອງປະຊຸມຕອນບ່າຍ ຂອງວັນທີ 22 ທັນວາ 2014

## ກອງປະຊຸມໄດ້ຕົກລົງ:

<u>ມາດຕາ 1</u> ຮັບຮອງເອົາກົດໝາຍວ່າດ້ວຍ ການຄຸ້ມຄອງເງິນຕາຕ່າງປະເທດ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

<u>ມາດຕາ 2</u> ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 22 ທັນວາ 2014

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 55 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 22 ທັນວາ 2014

# ກົດໝາຍ

# ວ່າດ້ວຍ ການຄຸ້ມຄອງເງິນຕາຕ່າງປະເທດ

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການເຄື່ອນໄຫວ, ຄຸ້ມຄອງ, ຕິດຕາມກວດກາ ທຸລະກິດ ແລະ ທຸລະກຳ ເງິນຕາຕ່າງປະເທດ ເພື່ອໃຫ້ມີປະສິດທິພາບ, ຖືກຕ້ອງ, ແນໃສ່ຍົກສູງຄຸນຄ່າ ແລະ ສະເຖຍລະພາບ ຂອງເງິນຕາແຫ່ງຊາດ, ສົ່ງເສີມການຈໍລະຈອນສິນຄ້າ-ເງິນຕາ ພາຍໃນປະເທດ, ເປີດກວ້າງການພົວພັນຮ່ວມມືເສດຖະກິດກັບຕ່າງປະເທດ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ການຄຸ້ມຄອງເງິນຕາຕ່າງປະເທດ**

ເງິນຕາຕ່າງປະເທດ ແມ່ນ ສະກຸນເງິນ ຂອງປະເທດອື່ນ ຊຶ່ງມີ ທະນະບັດ, ເງິນຫຼຽນ, ແຊັກ, ບັດຊຳລະ, ພັນທະບັດແລກເງິນ, ພັນທະບັດລັດຖະບານ, ພັນທະບັດວິສາຫະກິດ,. ໃບຮຸ້ນ, ເອກະສານມີຄ່າອື່ນ ແລະ ຄຳທີ່ສາກົນນຳໃຊ້ເປັນເຄື່ອງມືຊຳລະລະຫວ່າງປະເທດ.

ການຄຸ້ມຄອງເງິນຕາຕ່າງປະເທດ ແມ່ນ ການຄຸ້ມຄອງການເຄື່ອນໄຫວທຸລະກິດ ແລະ ທຸລະກຳເງິນຕາຕ່າງປະເທດ ຂອງຜູ້ມີ ແລະ ບໍ່ມີພູມລຳເນົາ ຢູ່ ສປປ ລາວ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ກ່ຽວກັບເງິນຕາຕ່າງປະເທດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ເງິນຕາ** ໝາຍເຖິງ ສະກຸນເງິນກີບ ແລະ ສະກຸນເງິນຕາຕ່າງປະເທດ;

2. **ອັດຕາແລກປ່ຽນ** ໝາຍເຖິງ ຄ່າຂອງເງິນສະກຸນໜຶ່ງທຽບໃສ່ຄ່າຂອງເງິນສະກຸນອື່ນ;

3. **ອັດຕາແລກປ່ຽນອ້າງອີງ** ໝາຍເຖິງ ອັດຕາແລກປ່ຽນ ທີ່ທະນາຄານ ແຫ່ງ ສປປ ລາວ ກຳນົດອອກ ເພື່ອເປັນບ່ອນອີງໃຫ້ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ;

4. **ສິນເຊື່ອການຄ້າ** ໝາຍເຖິງ ສັນຍາຊື້ສິນຄ້າ ແລະ ບໍລິການ ແບບຕິດໜີ້;

5. **ຮ້ານແລກປ່ຽນເງິນຕາ** ໝາຍເຖິງ ຫົວໜ່ວຍທຸລະກິດທີ່ໃຫ້ບໍລິການແລກປ່ຽນເງິນຕາ;

6. **ການຖືຄອງ** ໝາຍເຖິງ ການຮັກສາເງິນຕາໄວ້ດ້ວຍຕົນເອງ;

7. **ຜູ້ມີພູມລຳເນົາຢູ່ ສປປ ລາວ** ໝາຍເຖິງ:

- ພົນລະເມືອງລາວ ທີ່ຢູ່ ສປປ ລາວ;
- ພົນລະເມືອງລາວ ທີ່ໄປສຶກສາ, ທ່ອງທ່ຽວ, ຢ້ຽມຢາມ ແລະ ປິ່ນປົວສຸຂະພາບ ຢູ່ ຕ່າງປະເທດ;
- ເຈົ້າໜ້າທີ່ ຫຼື ພະນັກງານລາວ ທີ່ປະຈຳຢູ່ສະຖານທູດ, ສະຖານກົງສຸນລາວ ແລະ ອົງການຈັດຕັ້ງສາກົນ ຢູ່ ຕ່າງປະເທດ;
- ພົນລະເມືອງລາວ ທີ່ໄປຢູ່ຕ່າງປະເທດ ບໍ່ເກີນ ໜຶ່ງປີ;
- ອົງການຈັດຕັ້ງຂອງລັດ ແລະ ສະມາຄົມ ຂອງ ສປປ ລາວ ທີ່ເຄື່ອນໄຫວ ຢູ່ ພາຍໃນ ແລະ ຕ່າງປະເທດ;
- ບຸກຄົນ ແລະ ນິຕິບຸກຄົນລາວ ຫຼື ຕ່າງປະເທດ ທີ່ ຢູ່ ສປປ ລາວ ຊຶ່ງໄດ້ຮັບອະນຸຍາດດຳເນີນທຸລະກິດ ແລະ ຈົດທະບຽນຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ ລວມທັງຫ້ອງການຕົວແທນ ຂອງນິຕິບຸກຄົນດັ່ງກ່າວ ທີ່ຕັ້ງຢູ່ຕ່າງປະເທດ ບໍ່ເກີນ ໜຶ່ງປີ;
- ຄົນຕ່າງປະເທດ ທີ່ເຄື່ອນໄຫວວຽກງານ ຢູ່ ສປປ ລາວ ເກີນ ໜຶ່ງປີ ຊຶ່ງບໍ່ແມ່ນເຈົ້າໜ້າທີ່ ຫຼື ພະນັກງານຂອງສະຖານທູດ, ສະຖານກົງສຸນຂອງຕ່າງປະເທດ ຫຼື ອົງການຈັດຕັ້ງສາກົນ;
- ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດ ແລະ ທຳມາຫາກິນຢ່າງຖາວອນ ຢູ່ ສປປ ລາວ.

8. **ຜູ້ບໍ່ມີພູມລຳເນົາ ຢູ່ ສປປ ລາວ** ໝາຍເຖິງ:

- ບຸກຄົນ ແລະ ນິຕິບຸກຄົນ ຕ່າງປະເທດ ທີ່ຢູ່ຕ່າງປະເທດ;
- ຄົນຕ່າງປະເທດທີ່ມາສຶກສາ, ທ່ອງທ່ຽວ, ຢ້ຽມຢາມ ແລະ ປິ່ນປົວສຸຂະພາບ ຢູ່ ສປປ ລາວ;

- ສະຖານທູດ, ສະຖານກົງສຸນຂອງຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ເຈົ້າໜ້າທີ່ ຫຼື ພະນັກງານ ຕ່າງປະເທດ ຂອງອົງການຈັດຕັ້ງດັ່ງກ່າວ, ທີ່ປຶກສາ, ຜູ້ຊ່ຽວຊານຕ່າງປະເທດ ທີ່ມາປະຈຳ ຢູ່ ສປປ ລາວ ລວມທັງຄອບຄົວຂອງພວກກ່ຽວ;
- ຄົນຕ່າງປະເທດ ທີ່ມາຢູ່ ສປປ ລາວ ບໍ່ເກີນ ໜຶ່ງປີ;
- ຫ້ອງການຕົວແທນຂອງນິຕິບຸກຄົນຕ່າງປະເທດ ທີ່ຕັ້ງຢູ່ ສປປ ລາວ ບໍ່ເກີນ ໜຶ່ງປີ;
- ພົນລະເມືອງລາວ ທີ່ໄປຢູ່ຕ່າງປະເທດ ເກີນກວ່າ ໜຶ່ງປີ ຊຶ່ງບໍ່ແມ່ນການໄປສຶກສາ ຫຼື ປິ່ນປົວສຸຂະພາບ.

9. **ທຸລະກຳ** ໝາຍເຖິງ ການເຄື່ອນໄຫວທາງດ້ານເງິນຕາ ກ່ຽວກັບການຊື້-ຂາຍ, ການແລກປ່ຽນ, ການກູ້ຢືມ, ການໂອນ, ການຝາກ, ການຖອນ, ການຊຳລະ, ການນຳເຂົ້າ-ອອກ ແລະ ການເຄື່ອນໄຫວອື່ນ.

## ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານຄຸ້ມຄອງເງິນຕາຕ່າງປະເທດ

ລັດ ຄຸ້ມຄອງວຽກງານເງິນຕາຕ່າງປະເທດ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ເພື່ອຮັບປະກັນສະເຖຍລະພາບເງິນຕາແຫ່ງຊາດ ໃຫ້ມີຄວາມໝັ້ນທ່ຽງ ດ້ວຍການກຳນົດນະໂຍບາຍເງິນຕາທີ່ຄ່ອງຕົວ, ສ້າງເງື່ອນໄຂສະດວກ, ປະກອບບຸກຄະລາກອນ, ສະໜອງງົບປະມານ ແລະ ວັດຖູປະກອນ ໃຫ້ແກ່ອົງການທີ່ມີສິດກ່ຽວຂ້ອງ ຕາມຄວາມເໝາະສົມ.

ລັດ ຊຸກຍູ້, ປຸກລະດົມ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ເຂົ້າຮ່ວມໃນການເຄື່ອນໄຫວ ແລະ ຄຸ້ມຄອງ ເງິນຕາຕ່າງປະເທດ.

ລັດ ເອົາໃຈໃສ່ໂຄສະນາ, ສຶກສາອົບຮົມ, ສະໜອງຂໍ້ມູນ ຂ່າວສານໃຫ້ທົ່ວປວງຊົນດ້ວຍຫຼາຍຮູບການ ເພື່ອສ້າງຈິດສຳນຶກ ໃຫ້ສັງຄົມນຳໃຊ້ເງິນກີບ ແລະ ເງິນຕາຕ່າງປະເທດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ມາດຕາ 5 ຫຼັກການກ່ຽວກັບວຽກງານຄຸ້ມຄອງເງິນຕາຕ່າງປະເທດ

ວຽກງານຄຸ້ມຄອງເງິນຕາຕ່າງປະເທດ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ຮັບປະກັນການຄຸ້ມຄອງຂອງລັດ ກ່ຽວກັບວຽກງານເງິນຕາຕ່າງປະເທດແບບລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
2. ຮັບປະກັນສະເຖຍລະພາບເງິນຕາແຫ່ງຊາດ ໃຫ້ມີຄວາມໝັ້ນທ່ຽງ ;
3. ຮັບປະກັນຄວາມເປັນເອກະລາດດ້ານເງິນຕາແຫ່ງຊາດ;
4. ຮັບປະກັນການຊຳລະພາຍໃນ ແລະ ຕ່າງປະເທດ ມີຄວາມຄ່ອງຕົວ.

**ມາດຕາ 6 ພັນທະໃນການຄຸ້ມຄອງເງິນຕາຕ່າງປະເທດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວທຸລະກິດ ແລະ/ຫຼື ດຳເນີນທຸລະກຳ ຢູ່ ສປປ ລາວ ມີພັນທະໃນການຄຸ້ມຄອງເງິນຕາຕ່າງປະເທດ, ໃຫ້ການຮ່ວມມື ແລະ ປະກອບສ່ວນໃນການຈັດຕັ້ງປະຕິບັດ.

**ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວທຸລະກິດ ແລະ/ຫຼື ດຳເນີນທຸລະກຳ ເງິນຕາຕ່າງປະເທດ ຢູ່ ສປປ ລາວ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ສົ່ງເສີມ, ເປີດກວ້າງການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄຸ້ມຄອງເງິນຕາຕ່າງປະເທດ ດ້ວຍການແລກປ່ຽນຂໍ້ມູນຂ່າວສານ, ບົດຮຽນ, ປະສົບການ, ເຕັກໂນໂລຊີ, ການພັດທະນາຊັບພະຍາກອນມະນຸດ ແລະ ປະຕິບັດຕາມສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ການເຄື່ອນໄຫວກ່ຽວກັບເງິນຕາຕ່າງປະເທດ
### ໝວດທີ 1
### ການຄອບຄອງ, ການນຳໃຊ້ ແລະ ການແລກປ່ຽນ ເງິນຕາ ຢູ່ ສປປ ລາວ

**ມາດຕາ 9 ການຄອບຄອງເງິນຕາຕ່າງປະເທດ ຢູ່ ສປປ ລາວ**

ຜູ້ມີ ແລະ ບໍ່ມີພູມລຳເນົາ ຢູ່ ສປປ ລາວ ສາມາດຄອບຄອງເງິນຕາຕ່າງປະເທດ ທີ່ໄດ້ມາຢ່າງຖືກຕ້ອງຕາມກົດໝາຍ ດ້ວຍການຖືຄອງ ແລະ/ຫຼື ເປີດບັນຊີເງິນຝາກໄວ້ນຳທະນາຄານທຸລະກິດ ຢູ່ ສປປ ລາວ.

**ມາດຕາ 10 ການນຳໃຊ້ເງິນຕາ ຢູ່ ສປປ ລາວ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວທຸລະກິດ ແລະ/ຫຼື ດຳເນີນທຸລະກຳ ຢູ່ ສປປ ລາວ ສາມາດນຳໃຊ້ເງິນຕາຕ່າງປະເທດ ຕາມເປົ້າໝາຍ ດັ່ງນີ້:

1. ຊຳລະຄ່າສິນຄ້າທີ່ນຳເຂົ້າຈາກຕ່າງປະເທດ;

2. ຊຳລະຄ່າບໍລິການ ທີ່ຕິດພັນກັບສິນຄ້າຂາເຂົ້າ-ຂາອອກໂດຍກົງ ເຊັ່ນ ຄ່າຂົນສົ່ງຜ່ານແດນ, ຄ່າປະກັນໄພ, ຄ່າຝາກສາງຜ່ານແດນ ແລະ ຄ່າບໍລິການອື່ນ;

3. ຊຳລະໜີ້ເງິນກູ້ ແລະ ສິນເຊື່ອການຄ້າໃຫ້ຕ່າງປະເທດ;

4. ໃຫ້ການຊ່ວຍເຫຼືອແກ່ຕ່າງປະເທດ ຕາມການຕົກລົງຂອງລັດຖະບານ;

5. ໂອນເງິນກຳໄລ, ເງິນປັນຜົນ, ຕົ້ນທຶນ, ດອກເບ້ຍ, ຄ່າບໍລິການອື່ນ ຂອງນັກລົງທຶນຕ່າງປະເທດ ແລະ ຄ່າແຮງງານຂອງຄົນຕ່າງປະເທດ ກັບຄືນປະເທດ ຫຼື ໄປປະເທດທີສາມ;

6. ໂອນເງິນໄປລົງທຶນຢູ່ຕ່າງປະເທດ;

7. ສຶກສາ, ທ່ອງທ່ຽວ, ຢ້ຽມຢາມ ແລະ ປິ່ນປົວສຸຂະພາບ ຢູ່ ຕ່າງປະເທດ;

8. ປະຕິບັດເປົ້າໝາຍອື່ນ ຕາມລະບຽບການ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງນຳໃຊ້ເງິນກີບ ເຂົ້າໃນການຊື້-ຂາຍ, ຮັບຊຳລະ ແລະ ຊຳລະຄ່າສິນຄ້າ, ຄ່າບໍລິການ, ຊຳລະໜີ້, ເບີກຈ່າຍເງິນເດືອນ, ປະຕິບັດພັນທະຕໍ່ລັດ, ກຳນົດມູນຄ່າ, ການຕິດປະກາດ ແລະ ໂຄສະນາ ລາຄາສິນຄ້າ, ຄ່າບໍລິການ ແລະ ອື່ນໆ ໃນ ສປປ ລາວ ເປັນເງິນກີບ ຍົກເວັ້ນກໍລະນີທີ່ໄດ້ຮັບອະນຸຍາດຈາກລັດຖະບານ.

## ມາດຕາ 11 ການແລກປ່ຽນເງິນຕາ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວທຸລະກິດ ແລະ/ຫຼື ດຳເນີນທຸລະກຳ ຢູ່ ສປປ ລາວ ທີ່ມີຈຸດປະສົງປ່ຽນເງິນຈາກສະກຸນໜຶ່ງ ເປັນເງິນສະກຸນອື່ນ ຕ້ອງແລກປ່ຽນເງິນຕານຳທະນາຄານທຸລະກິດ ຫຼື ຮ້ານແລກປ່ຽນເງິນຕາ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ເທົ່ານັ້ນ.

ກະຊວງການເງິນ ສາມາດແລກປ່ຽນເງິນຕານຳລະບົບທະນາຄານ ເພື່ອຊຳລະກັບຕ່າງປະເທດ.

## ມາດຕາ 12 ການກຳນົດອັດຕາແລກປ່ຽນ

ທະນາຄານແຫ່ງ ສປປ ລາວ ນຳໃຊ້ລະບົບອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ດ້ວຍການກຳນົດອັດຕາແລກປ່ຽນອ້າງອີງໃນແຕ່ລະວັນ ເພື່ອໃຫ້ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ນຳໄປກຳນົດອັດຕາແລກປ່ຽນຂອງຕົນ.

## ໝວດທີ 2
## ການໂອນເງິນຕາຕ່າງປະເທດ
## ແລະ ການນຳເງິນຕາເປັນເງິນສົດ ເຂົ້າ-ອອກ ສປປ ລາວ

**ມາດຕາ 13 ການໂອນເງິນຕາຕ່າງປະເທດ**

ຜູ່ມີ ແລະ ບໍ່ມີພູມລຳເນົາ ຢູ່ ສປປ ລາວ ສາມາດໂອນເງິນຕາຕ່າງປະເທດ ເຂົ້າ ສປປ ລາວ ໂດຍບໍ່ຈຳກັດຈຳນວນ. ສຳລັບການໂອນເງິນຕາຕ່າງປະເທດ ອອກ ສປປ ລາວ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ ແລະ ສອດຄ່ອງກັບມາດຕາ10 ວັກໜຶ່ງ ຂອງກົດໝາຍສະບັບນີ້.

**ມາດຕາ 14 ການນຳເງິນຕາເປັນເງິນສົດ ເຂົ້າ-ອອກ ສປປ ລາວ**

ຜູ່ມີ ແລະ ບໍ່ມີພູມລຳເນົາ ຢູ່ ສປປ ລາວ ສາມາດນຳເງິນຕາເປັນເງິນສົດເຂົ້າ ສປປ ລາວ ຕາມຈຳນວນທີ່ທະນາຄານ ແຫ່ງ ສປປ ລາວ ກຳນົດ, ຖ້າເກີນຈຳນວນດັ່ງກ່າວ ຕ້ອງແຈ້ງຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນ ເພື່ອອອກເອກະສານຢັ້ງຢືນ.

ຜູ່ມີ ແລະ ບໍ່ມີພູມລຳເນົາ ຢູ່ ສປປ ລາວ ສາມາດນຳເງິນຕາເປັນເງິນສົດອອກ ສປປ ລາວ ຕາມຈຳນວນທີ່ທະນາຄານ ແຫ່ງ ສປປ ລາວ ກຳນົດ, ຖ້າເກີນຈຳນວນດັ່ງກ່າວ ຕ້ອງຂໍອະນຸຍາດຈາກທະນາຄານ ແຫ່ງ ສປປ ລາວ, ໃນກໍລະນີມີເອກະສານຢັ້ງຢືນກ່ຽວກັບການນຳເງິນຕາເຂົ້າ ສປປ ລາວ ສາມາດແຈ້ງຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນ ເພື່ອນຳເງິນຕານັ້ນອອກ ສປປ ລາວ.

## ໝວດທີ 3
## ການເປີດບັນຊີ ແລະ ການນຳໃຊ້ເງິນຕາໃນບັນຊີເງິນຝາກ

**ມາດຕາ 15 ການເປີດບັນຊີ ແລະ ການນຳໃຊ້ເງິນຕາໃນບັນຊີເງິນຝາກ ຢູ່ ສປປ ລາວ**

ຜູ່ມີ ແລະ ບໍ່ມີພູມລຳເນົາ ຢູ່ ສປປ ລາວ ສາມາດເປີດບັນຊີເງິນຝາກ, ຖອນ ແລະ ຮັບດອກເບ້ຍເປັນເງິນຕາຕ່າງປະເທດ ນຳທະນາຄານທຸລະກິດ ຢູ່ ສປປ ລາວ.

ຜູ່ບໍ່ມີພູມລຳເນົາ ຢູ່ ສປປ ລາວ ທີ່ມີເງິນຕາຕ່າງປະເທດ ສາມາດເປີດບັນຊີເງິນຝາກ ເປັນເງິນກີບ ໂດຍຜ່ານການແລກປ່ຽນເງິນຕາຕ່າງປະເທດ ນຳທະນາຄານທຸລະກິດ ແລະ ສາມາດຖອນ, ຮັບດອກເບ້ຍເປັນເງິນກີບ ແລະ ນຳໃຊ້ເງິນກີບໃນບັນຊີນັ້ນ ແລກປ່ຽນເປັນເງິນຕາຕ່າງປະເທດໄດ້.

**ມາດຕາ 16 ການເປີດບັນຊີເງິນຝາກ ຢູ່ ຕ່າງປະເທດ**

ຜູ້ມີພູມລຳເນົາຢູ່ ສປປ ລາວ ສາມາດເປີດບັນຊີເງິນຝາກຂອງຕົນ ຢູ່ ຕ່າງປະເທດ ຕາມການອະນຸຍາດຂອງທະນາຄານ ແຫ່ງ ສປປ ລາວ ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ທຸລະກິດຜ່ານແດນ ເປັນຕົ້ນ ການຂົນສົ່ງທາງບົກ, ທາງອາກາດ ແລະ ທາງນ້ຳ, ການໄປສະນີ, ການປະກັນໄພ, ການທ່ອງທ່ຽວ, ການນຳແຮງງານອອກ ແລະ ການຮັບເໝົາໂຄງການຢູ່ຕ່າງປະເທດ;
2. ການຮອງຮັບເງິນກູ້ ແລະ ຊຳລະເງິນກູ້ ລວມທັງ ສິນເຊື່ອການຄ້າ ກັບຕ່າງປະເທດ;
3. ການສ້າງຕັ້ງສາຂາ ຫຼື ຫ້ອງການຜູ້ຕາງໜ້າ ຢູ່ ຕ່າງປະເທດ ຕາມການອະນຸຍາດຂອງອົງການທີ່ກ່ຽວຂ້ອງ;
4. ການລົງທຶນຢູ່ຕ່າງປະເທດ;
5. ເປົ້າໝາຍອື່ນ ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ.

ສຳລັບນັກສຶກສາ, ນັກການທູດ ແລະ ພະນັກງານທີ່ຖືກມອບໝາຍ ໃຫ້ໄປເຮັດວຽກຢູ່ຕ່າງປະເທດ ສາມາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ໂດຍບໍ່ຕ້ອງຂໍອະນຸຍາດຈາກທະນາຄານ ແຫ່ງ ສປປ ລາວ.

**ມາດຕາ 17 ລາຍຮັບເປັນເງິນຕາຕ່າງປະເທດ**

ຜູ້ມີພູມລຳເນົາ ຢູ່ ສປປ ລາວ ທີ່ດຳເນີນທຸລະກິດກັບຕ່າງປະເທດ ຊຶ່ງມີລາຍຮັບເປັນເງິນຕາຕ່າງປະເທດ ຕ້ອງໂອນລາຍຮັບດັ່ງກ່າວເຂົ້າບັນຊີຂອງຕົນ ທີ່ເປີດຢູ່ທະນາຄານທຸລະກິດ ທີ່ຕັ້ງຢູ່ ສປປ ລາວ.

ທຸກລາຍຮັບງົບປະມານແຫ່ງລັດ ທີ່ເປັນເງິນຕາຕ່າງປະເທດ ໃຫ້ຝາກໄວ້ຢູ່ທະນາຄານ ແຫ່ງ ສປປ ລາວ, ເມື່ອຕ້ອງການນຳໃຊ້ຢູ່ພາຍໃນປະເທດ ຕ້ອງຂາຍເງິນຕາຕ່າງປະເທດ ໃຫ້ທະນາຄານ ແຫ່ງ ສປປ ລາວ ຕາມອັດຕາແລກປ່ຽນຂອງທະນາຄານ ແຫ່ງ ສປປ ລາວ ທີ່ປະກາດໃຊ້ໃນແຕ່ລະວັນ.

## ໝວດທີ 4
## ການດຳເນີນທຸລະກິດເງິນຕາຕ່າງປະເທດ

**ມາດຕາ 18 ທຸລະກິດເງິນຕາຕ່າງປະເທດ**

ທຸລະກິດເງິນຕາຕ່າງປະເທດ ປະກອບດ້ວຍ ທຸລະກິດແລກປ່ຽນເງິນຕາ ແລະ ທຸລະກິດນຳເຂົ້າ-ສົ່ງອອກຄຳທີ່ສາກົນນຳໃຊ້ເປັນເຄື່ອງມືຊຳລະລະຫວ່າງປະເທດ.

**ມາດຕາ 19 ການຂໍອະນຸຍາດດຳເນີນທຸລະກິດເງິນຕາຕ່າງປະເທດ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນທຸລະກິດເງິນຕາຕ່າງປະເທດ ຕ້ອງຍື່ນຄຳຮ້ອງ ແລະ ເອກະສານປະກອບຂໍອະນຸຍາດດຳເນີນທຸລະກິດເງິນຕາຕ່າງປະເທດ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ໄດ້ຮັບອະນຸຍາດຈາກທະນາຄານ ແຫ່ງ ສປປ ລາວ.

ສຳລັບເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດເງິນຕາຕ່າງປະເທດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 20 ການພິຈາລະນາຂໍອະນຸຍາດດຳເນີນທຸລະກິດເງິນຕາຕ່າງປະເທດ**

ພາຍຫຼັງໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບຂໍອະນຸຍາດດຳເນີນທຸລະກິດຈາກຂະແໜງການອຸດສາຫະກຳ ແລະ ການຄ້າແລ້ວ ທະນາຄານ ແຫ່ງ ສປປ ລາວ ຈະຄົ້ນຄວ້າ ແລະ ພິຈາລະນາພາຍໃນກຳນົດເວລາ ສິບຫ້າວັນ ລັດຖະການ ສຳລັບທຸລະກິດແລກປ່ຽນເງິນຕາ ແລະ ສາມສິບວັນລັດຖະການ ສຳລັບທຸລະກິດນຳເຂົ້າ-ສົ່ງອອກຄຳທີ່ສາກົນນຳໃຊ້ເປັນເຄື່ອງມືຊຳລະລະຫວ່າງປະເທດ ນັບ ແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບຄົບຖ້ວນ ແລະ ຖືກຕ້ອງຕາມລະບຽບການ.

# ພາກທີ III

# ການກູ້ຢືມເງິນ, ເງິນຊ່ວຍເຫຼືອລ້າ ແລະ ການນຳທຶນເຂົ້າ-ອອກ ສປປ ລາວ

## ໝວດທີ 1

## ການກູ້ຢືມ ແລະ ການຊ່ວຍເຫຼືອລ້າ

**ມາດຕາ 21 ການກູ້ຢືມເງິນຈາກຕ່າງປະເທດຂອງລັດຖະບານ**

ກະຊວງການເງິນ ເປັນຜູ້ຕາງໜ້າລັດຖະບານ ໃນການເຊັນສັນຍາກູ້ຢືມເງິນ ຫຼື ອອກໜັງສືຄ້ຳປະກັນໃນການກູ້ຢືມເງິນຈາກຕ່າງປະເທດ ຂອງລັດຖະບານ ແລະ ມີໜ້າທີ່ຄຸ້ມຄອງ ຕິດຕາມ ກວດກາການຈັດຕັ້ງປະຕິບັດສັນຍາກູ້ຢືມ ລວມທັງເປີດບັນຊີເງິນຝາກຂອງລັດຖະບານ ຢູ່ ຕ່າງປະເທດ, ການນຳໃຊ້ເງິນກູ້ຂອງລັດຖະບານ ພ້ອມທັງແຈ້ງການກູ້ຢືມເງິນດັ່ງກ່າວ ໃຫ້ທະນາຄານ ແຫ່ງ ສປປ ລາວຢ່າງເປັນລາຍລັກອັກສອນ.

ເງິນກູ້ຢືມຈາກຕ່າງປະເທດຂອງລັດຖະບານ ຕ້ອງລວມສູນເຂົ້າບັນຊີເງິນຝາກຂອງກະຊວງການເງິນ ຫຼື ບັນຊີໂຄງການຂອງລັດຖະບານ ທີ່ເປີດໄວ້ນຳທະນາຄານ ແຫ່ງ ສປປ ລາວ. ເງິນກູ້ດັ່ງກ່າວສາມາດນຳໃຊ້ຊຳລະກັບຕ່າງປະເທດໂດຍກົງ ຫຼື ແລກປ່ຽນເອົາເງິນກີບນຳທະນາຄານ ແຫ່ງ ສປປ ລາວເພື່ອນຳໃຊ້ຢູ່ພາຍໃນປະເທດ.

**ມາດຕາ 22 ການຄຸ້ມຄອງເງິນຊ່ວຍເຫຼືອລ້າ**

ກະຊວງການເງິນ ມີໜ້າທີ່ຄຸ້ມຄອງຢ່າງລວມສູນ ແລະ ສະຫຼຸບ ສັງລວມມູນຄ່າການຊ່ວຍເຫຼືອລ້າ ຈາກຕ່າງປະເທດ ລວມທັງການຊ່ວຍເຫຼືອຂອງອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ ທີ່ເປັນເງິນ ແລະ ວັດຖຸ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ. ສໍາລັບເງິນຊ່ວຍເຫຼືອລ້າທີ່ເປັນເງິນຕາຕ່າງປະເທດ ຕ້ອງນໍາເຂົ້າມາລວມສູນຢູ່ໃນບັນຊີເງິນຝາກຂອງກະຊວງການເງິນ ທີ່ເປີດໄວ້ນໍາທະນາຄານແຫ່ງ ສປປ ລາວ.

ກະຊວງການເງິນ ມີໜ້າທີ່ຕິດຕາມ, ກວດກາ ແລະ ສະຫຼຸບ ສັງລວມມູນຄ່າການຊ່ວຍເຫຼືອລ້າໃຫ້ແກ່ຕ່າງປະເທດ ຂອງລັດຖະບານ, ນິຕິບຸກຄົນ ແລະ ການຈັດຕັ້ງ ລວມທັງອົງການຈັດຕັ້ງສັງຄົມຂອງ ສປປ ລາວ.

**ມາດຕາ 23 ການໃຫ້ກູ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ**

ຜູ້ມີພູມລໍາເນົາ ຢູ່ ສປປ ລາວ ກ່ອນໃຫ້ກູ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ ຕ້ອງຂໍອະນຸຍາດຈາກທະນາຄານ ແຫ່ງ ສປປ ລາວ ຊຶ່ງທຸລະກໍາດັ່ງກ່າວ ຕ້ອງດໍາເນີນຜ່ານລະບົບທະນາຄານ ພ້ອມທັງລາຍງານໃຫ້ທະນາຄານ ແຫ່ງ ສປປ ລາວ ກ່ຽວກັບການຊໍາລະສະສາງເງິນກູ້ ແລະ ສິນເຊື່ອການຄ້ານັ້ນ ຈົນກວ່າຈະຄົບຖ້ວນຕາມສັນຍາ.

## ໝວດທີ 2
## ການນໍາທຶນເຂົ້າ-ອອກ ສປປ ລາວ

**ມາດຕາ 24 ການນໍາທຶນເຂົ້າມາລົງທຶນຂອງຕ່າງປະເທດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຂອງຕ່າງປະເທດ ທີ່ມີຈຸດປະສົງມາລົງທຶນ ຢູ່ ສປປ ລາວ ຕ້ອງນໍາເງິນທຶນເຂົ້າມາຜ່ານລະບົບທະນາຄານ ແລະ ເປີດບັນຊີເງິນຝາກນໍາທະນາຄານທຸລະກິດ ທີ່ຕັ້ງຢູ່ ສປປ ລາວ. ການນໍາທຶນທີ່ເປັນເງິນຕາຕ່າງປະເທດ ແລະ ເປັນວັດຖຸ ເຂົ້າມາຕົວຈິງນັ້ນ ຕ້ອງນໍາເອກະສານມາຢັ້ງຢືນ ນໍາທະນາຄານ ແຫ່ງ ສປປ ລາວ ຕາມລະບຽບການ.

ທຶນເປັນວັດຖຸ ແມ່ນ ມູນຄ່າຂອງວັດຖຸປະກອບທີ່ຜູ້ລົງທຶນໄດ້ຊື້ ແລະ ຊໍາລະຢູ່ຕ່າງປະເທດ ແລ້ວນໍາເຂົ້າມາຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ເພື່ອຮັບໃຊ້ການດໍາເນີນທຸລະກິດໂດຍກົງ. ສ່ວນວັດຖຸທີ່ນໍາເຂົ້າ ໂດຍນໍາໃຊ້ເງິນຢູ່ພາຍໃນ ສປປ ລາວ ຊໍາລະ ຈະບໍ່ຖືວ່າແມ່ນທຶນເປັນວັດຖຸ. ການແຈ້ງທຶນເປັນວັດຖຸ ຕ້ອງມີເອກະສານທີ່ຕິດພັນກັບການນໍາເຂົ້າວັດຖຸປະກອບ ຈາກພາກສ່ວນທີ່ກ່ຽວຂ້ອງຕາມລະບຽບການ.

ໃນກໍລະນີນໍາທຶນເຂົ້າມາລົງທຶນເປັນເງິນສົດ ຕ້ອງມີໃບຢັ້ງຢືນແຈ້ງເງິນສົດຈາກເຈົ້າໜ້າທີ່ພາສີປະຈໍາດ່ານ ແລະ ເອກະສານທີ່ກ່ຽວຂ້ອງ.

**ມາດຕາ 25 ການນຳທຶນອອກໄປລົງທຶນຢູ່ຕ່າງປະເທດ**

ຜູ້ມີພູມລຳເນົາ ຢູ່ ສປປ ລາວ ທີ່ຕ້ອງການນຳທຶນອອກໄປລົງທຶນຢູ່ຕ່າງປະເທດ ຕ້ອງໄດ້ຮັບອະນຸຍາດຈາກທະນາຄານ ແຫ່ງ ສປປ ລາວ ບົນພື້ນຖານການເຫັນດີຈາກອົງການທີ່ກ່ຽວຂ້ອງ.

## ພາກທີ IV
## ດຸນຊຳລະກັບຕ່າງປະເທດ

**ມາດຕາ 26 ດຸນຊຳລະກັບຕ່າງປະເທດ**

ດຸນຊຳລະກັບຕ່າງປະເທດ ແມ່ນ ການແລກປ່ຽນກິດຈະກຳທາງດ້ານເສດຖະກິດ ລະຫວ່າງຜູ້ມີ ແລະ ຜູ້ບໍ່ມີພູມລຳເນົາ ຢູ່ ສປປ ລາວ ເປັນຕົ້ນ ການຊື້-ຂາຍ, ແລກປ່ຽນສິນຄ້າ ແລະ ບໍລິການ, ການໂອນເງິນຊ່ວຍເຫຼືອ, ການໂອນກຳມະສິດຊັບສິນ ແລະ ໜີ້ສິນ, ການກູ້ຢືມ ແລະ ການຊຳລະຄືນ, ການໄຫຼເຂົ້າ-ອອກຂອງເງິນທຶນ ລະຫວ່າງປະເທດ ໃນໄລຍະເວລາໃດໜຶ່ງ.

**ມາດຕາ 27 ການສັງລວມສະຖິຕິ ແລະ ສ້າງແຜນດຸນຊຳລະກັບຕ່າງປະເທດ**

ທະນາຄານ ແຫ່ງ ສປປ ລາວ ມີໜ້າທີ່ສັງລວມສະຖິຕິ ແລະ ສ້າງແຜນ ດຸນຊຳລະກັບຕ່າງປະເທດ ຂອງລະບົບເສດຖະກິດແຫ່ງຊາດ ເພື່ອຄຸ້ມຄອງເສດຖະກິດມະຫາພາກ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ.

ຜູ້ມີ ແລະ ບໍ່ມີພູມລຳເນົາ ຢູ່ ສປປ ລາວ ທີ່ມີລາຍຮັບ-ລາຍຈ່າຍ ເປັນເງິນຕາຕ່າງປະເທດ ຕ້ອງໃຫ້ຄວາມຮ່ວມມື, ສະຫຼຸບ ແລະ ລາຍງານຂໍ້ມູນໃຫ້ທະນາຄານ ແຫ່ງ ສປປ ລາວ.

## ພາກທີ V
## ຂໍ້ຫ້າມ

**ມາດຕາ 28 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວທຸລະກິດ ແລະ ດຳເນີນທຸລະກຳ ຢູ່ ສປປ ລາວ ມີພຶດຕິກຳ ດັ່ງນີ້:

1. ຮັບຊຳລະ ແລະ ຊຳລະຄ່າສິນຄ້າ, ຄ່າບໍລິການ, ຊຳລະໜີ້, ເບີກຈ່າຍເງິນເດືອນ, ປະຕິບັດພັນທະຕໍ່ລັດ, ກຳນົດມູນຄ່າໃນສັນຍາ, ຕິດປະກາດ ແລະ ໂຄສະນາ ລາຄາ ແລະ ຄ່າອື່ນ ໃນ ສປປ ລາວ ເປັນເງິນຕາຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ;
2. ດຳເນີນທຸລະກິດເງິນຕາຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ;

3. ແລກປ່ຽນເງິນຕາ ກັບບຸກຄົນ, ນິຕິບຸກຄົນ ແລະ/ຫຼື ຫົວໜ່ວຍທຸລະກິດ ທີ່ບໍ່ໄດ້ຮັບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ຕາມກົດໝາຍ ແລະ ລະບຽບການ;

4. ກຳນົດ ແລະ ຕິດປະກາດ ອັດຕາແລກປ່ຽນ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;

5. ປັ່ນປ່ວນອັດຕາແລກປ່ຽນ ທີ່ສົ່ງຜົນເສຍຫາຍຕໍ່ລະບົບເສດຖະກິດຂອງປະເທດ;

6. ນຳເງິນຕາເປັນເງິນສົດ ທີ່ມີມູນຄ່າເກີນລະບຽບການກຳນົດໄວ້ ເຂົ້າ ສປປ ລາວ ໂດຍບໍ່ແຈ້ງຕໍ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ແລະ ອອກ ສປປ ລາວ ໂດຍບໍ່ໄດ້ຮັບອະນຸຍາດ;

7. ເປີດບັນຊີເງິນຝາກຢູ່ຕ່າງປະເທດ ໂດຍບໍ່ສອດຄ່ອງກັບມາດຕາ 16 ຂໍ້ 1 ຫາ 5 ຂອງກົດໝາຍສະບັບນີ້;

8. ໃຫ້ກູ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານ ແຫ່ງ ສປປ ລາວ;

9. ປົດບັງຄວາມຜິດ ຫຼື ໃຫ້ການຮ່ວມມືໃນການກະທຳຜິດ ກ່ຽວກັບເງິນຕາ;

10. ຂັດຂວາງ, ປະຕິເສດການຮ່ວມມື ກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານຄຸ້ມຄອງເງິນຕາຕ່າງປະເທດ;

11. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ມາດຕາ 29 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດເງິນຕາຕ່າງປະເທດ

ຫ້າມຜູ້ດຳເນີນທຸລະກິດເງິນຕາຕ່າງປະເທດ ມີ ພຶດຕິກຳ ດັ່ງນີ້:

1. ເຄື່ອນໄຫວທຸລະກິດເງິນຕາຕ່າງປະເທດ ໂດຍບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ ຫຼື ຂອບເຂດທີ່ໄດ້ຮັບອະນຸຍາດ;

2. ໃຫ້ສິນບົນ ແກ່ເຈົ້າໜ້າທີ່ ຫຼື ພະນັກງານຂອງລັດ;

3. ປົດບັງຂໍ້ມູນ, ລາຍງານຂໍ້ມູນບໍ່ຖືກຕ້ອງ ຫຼື ປອມແປງເອກະສານໃນການດຳເນີນທຸລະກິດເງິນຕາຕ່າງປະເທດ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ມາດຕາ 30 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ຫຼື ພະນັກງານ ຂອງລັດ

ຫ້າມເຈົ້າໜ້າທີ່ ຫຼື ພະນັກງານ ຂອງລັດ ມີ ພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ, ເປັນທີ່ປຶກສາ, ເປັນພະນັກງານວິຊາການ ໃຫ້ແກ່ຫົວໜ່ວຍທຸລະກິດທີ່ດຳເນີນທຸລະກິດເງິນຕາຕ່າງປະເທດ ທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ;

2. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ກ່ອນໄດ້ຮັບອະນຸຍາດ;

3. ທວງເອົາ, ຂໍເອົາ, ຮັບສິນບົນ, ລຳອຽງ, ກົດໜ່ວງຖ່ວງດຶງ, ສົມຮູ້ຮ່ວມຄິດ, ປອມແປງເອກະສານກ່ຽວກັບວຽກງານເງິນຕາຕ່າງປະເທດ;

4. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ແລະ/ຫຼື ໝູ່ຄະນະ ກ່ຽວກັບເງິນຕາຕ່າງປະເທດ ລວມທັງການດຳເນີນທຸລະກິດທີ່ກ່ຽວຂ້ອງ;

5. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ, ຕໍ່ພຶດຕິກຳທີ່ບໍ່ຖືກຕ້ອງຂອງຜູ້ດຳເນີນທຸລະກິດເງິນຕາຕ່າງປະເທດ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ VI
## ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 31 ຮູບການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບເງິນຕາຕ່າງປະເທດ ໃຫ້ດຳເນີນຕາມຮູບການໃດໜຶ່ງ ດັ່ງນີ້:

1. ການແກ້ໄຂດ້ວຍການປະນີປະນອມກັນ;
2. ການແກ້ໄຂທາງບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການແກ້ໄຂໂດຍສານປະຊາຊົນ;
5. ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ.

### ມາດຕາ 32 ການແກ້ໄຂດ້ວຍການປະນີປະນອມກັນ

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບເງິນຕາຕ່າງປະເທດ ລວມທັງການດຳເນີນທຸລະກິດເງິນຕາຕ່າງປະເທດ ຄູ່ກໍລະນີສາມາດແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ດ້ວຍການປຶກສາຫາລື ແລະ ປະນີປະນອມກັນເພື່ອໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

### ມາດຕາ 33 ການແກ້ໄຂທາງບໍລິຫານ

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບເງິນຕາຕ່າງປະເທດ ລວມທັງການດຳເນີນທຸລະກິດເງິນຕາຕ່າງປະເທດ ທີ່ມີລັກສະນະບໍລິຫານ ຊຶ່ງຢູ່ພາຍໃຕ້ຂອບເຂດຄວາມຮັບຜິດຊອບຂອງທະນາຄານ ແຫ່ງ ສປປ

ລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ, ຄູ່ກໍລະນີສາມາດສະເໜີຕໍ່ຂະແໜງການດັ່ງກ່າວ ເພື່ອພິຈາລະນາແກ້ໄຂຕາມກົດໝາຍ.

**ມາດຕາ 34 ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບເງິນຕາຕ່າງປະເທດ ລວມທັງການດໍາເນີນທຸລະກິດເງິນຕາຕ່າງປະເທດ ຄູ່ກໍລະນີມີສິດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເມື່ອມີການຕົກລົງກັນ ເພື່ອພິຈາລະນາແກ້ໄຂຕາມກົດໝາຍ.

**ມາດຕາ 35 ການແກ້ໄຂໂດຍສານປະຊາຊົນ**

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບເງິນຕາຕ່າງປະເທດ ລວມທັງການດໍາເນີນທຸລະກິດເງິນຕາຕ່າງປະເທດ ຄູ່ກໍລະນີມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຕາມກົດໝາຍ.

**ມາດຕາ 36 ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ**

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບວຽກງານເງິນຕາຕ່າງປະເທດ ທີ່ມີລັກສະນະສາກົນ ໃຫ້ປະຕິບັດຕາມກົດໝາຍ ຂອງ ສປປ ລາວ ຫຼື ສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ VII
## ການຄຸ້ມຄອງ ແລະ ກວດກາ ວຽກງານເງິນຕາຕ່າງປະເທດ
### ໝວດທີ 1
### ການຄຸ້ມຄອງວຽກງານເງິນຕາຕ່າງປະເທດ

**ມາດຕາ 37 ອົງການຄຸ້ມຄອງວຽກງານເງິນຕາຕ່າງປະເທດ**

ລັດຖະບານ ແຫ່ງ ສປປ ລາວ ຄຸ້ມຄອງວຽກງານເງິນຕາຕ່າງປະເທດ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ທະນາຄານ ແຫ່ງ ສປປ ລາວ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນໃຈກາງໃນການປະສານສົມທົບກັບ ກະຊວງການເງິນ, ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງປ້ອງກັນຄວາມສະຫງົບ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 38 ສິດ ແລະ ໜ້າທີ່ ຂອງທະນາຄານແຫ່ງ ສປປ ລາວ**

ທະນາຄານ ແຫ່ງ ສປປ ລາວ ມີ ສິດ ແລະ ໜ້າທີ່ ໃນການຄຸ້ມຄອງວຽກງານເງິນຕາຕ່າງປະເທດ ດັ່ງນີ້:

1. ຄົ້ນຄວ້າສ້າງແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ເພື່ອສະເໜີລັດຖະບານພິຈາລະນາ;

2. ອະນຸຍາດ, ໂຈະ ຫຼື ຍຸບເລີກ ການດຳເນີນທຸລະກິດເງິນຕາຕ່າງປະເທດ, ການເປີດບັນຊີເງິນຝາກຢູ່ຕ່າງປະເທດ, ການໃຫ້ກູ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ ພ້ອມທັງຕິດຕາມກວດກາຫົວໜ່ວຍທຸລະກິດດັ່ງກ່າວ;

3. ໂຄສະນາ, ເຜີຍແຜ່ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານເງິນຕາຕ່າງປະເທດ ແລະ ປູກຈິດສຳນຶກໃຫ້ແກ່ສັງຄົມ ໃນການນຳໃຊ້ເງິນກີບ;

4. ສ້າງ, ບຳລຸງ, ຈັດຝຶກອົບຮົມ ແລະ ຍົກລະດັບຄວາມຮູ້ ກ່ຽວກັບວຽກງານເງິນຕາຕ່າງປະເທດ ໃຫ້ແກ່ພະນັກງານ ແລະ ການຈັດຕັ້ງທີ່ກ່ຽວຂ້ອງຂອງຕົນ;

5. ເກັບກຳ, ສັງລວມຂໍ້ມູນ ກ່ຽວກັບວຽກງານເງິນຕາຕ່າງປະເທດ;

6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານເງິນຕາຕ່າງປະເທດ;

7. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄຸ້ມຄອງເງິນຕາຕ່າງປະເທດ;

8. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານເງິນຕາຕ່າງປະເທດ ໃຫ້ລັດຖະບານຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 39 ສິດ ແລະ ໜ້າທີ່ ຂອງບັນດາກະຊວງ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ**

ບັນດາກະຊວງ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ຂອງຕົນ ໃນການຄຸ້ມຄອງວຽກງານເງິນຕາຕ່າງປະເທດ ດັ່ງນີ້:

1. ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ໃນການຄຸ້ມຄອງ, ຕິດຕາມ, ກວດກາ ການນຳໃຊ້ເງິນກູ້ ແລະ ການຄ້ຳປະກັນເງິນກູ້ຂອງລັດຖະບານ ລວມທັງເງິນຊ່ວຍເຫຼືອລ້າ ທີ່ສະໜອງໃຫ້ແກ່ລັດຖະບານ, ຮັບແຈ້ງການນຳເງິນຕາ ເຂົ້າ-ອອກ ສປປ ລາວ ພ້ອມທັງນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ຕາມພາລະບົດບາດຂອງຕົນ;

2. ກະຊວງອຸດສາຫະກຳ ແລະ ການຄ້າ ມີ ສິດ ແລະ ໜ້າທີ່ ໃນການຄຸ້ມຄອງ, ຕິດຕາມການໂຄສະນາ, ການກຳນົດ ລາຄາສິນຄ້າ, ຄ່າບໍລິການ ແລະ ຄ່າອື່ນ ໃຫ້ເປັນເງິນກີບ ພ້ອມທັງນຳໃຊ້

ມາດຕະການຕໍ່ຜູ້ລະເມີດກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ຕາມພາລະບົດບາດຂອງຕົນ;

3. ກະຊວງແຜນການ ແລະ ການລົງທຶນ ມີ ສິດ ແລະ ໜ້າທີ່ ໃນການຄຸ້ມຄອງ, ຕິດຕາມການນຳທຶນເຂົ້າຂອງຜູ້ລົງທຶນຕ່າງປະເທດ ແລະ ການໄປລົງທຶນຢູ່ຕ່າງປະເທດ ຂອງ ຜູ້ມີພູມລຳເນົາຢູ່ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ຕາມພາລະບົດບາດຂອງຕົນ;

4. ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ໃນການຄຸ້ມຄອງ, ຕິດຕາມການນຳໃຊ້ ແລະ ແລກປ່ຽນເງິນຕາ ທີ່ບໍ່ໄດ້ຮັບອະນຸຍາດຈາກທະນາຄານ ແຫ່ງ ສປປ ລາວ ພ້ອມທັງນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ຕາມພາລະບົດບາດຂອງຕົນ;

5. ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ປະກອບສ່ວນໃນການຄຸ້ມຄອງ, ຕິດຕາມການເຄື່ອນໄຫວກ່ຽວກັບວຽກງານເງິນຕາຕ່າງປະເທດ, ສະໜອງຂໍ້ມູນ ແລະ ໃຫ້ການຮ່ວມມືກັບທະນາຄານ ແຫ່ງ ສປປ ລາວ ລວມທັງອົງການຄຸ້ມຄອງອື່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 37 ຂອງກົດໝາຍສະບັບນີ້ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານເງິນຕາຕ່າງປະເທດ

### ມາດຕາ 40 ອົງການກວດກາວຽກງານເງິນຕາຕ່າງປະເທດ

ອົງການກວດກາວຽກງານເງິນຕາຕ່າງປະເທດ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານເງິນຕາຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 37 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ປະຊາຊົນ.

### ມາດຕາ 41 ເນື້ອໃນການກວດກາ

ການກວດກາວຽກງານເງິນຕາຕ່າງປະເທດ ມີ ເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດກົດໝາຍ ກ່ຽວກັບການຄຸ້ມຄອງວຽກງານເງິນຕາຕ່າງປະເທດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

2. ການປະຕິບັດສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງ ລວມທັງການນຳໃຊ້ມາດຕະການທາງດ້ານກົດໝາຍຕໍ່ຜູ້ລະເມີດ;

3. ການເຄື່ອນໄຫວທຸລະກິດ ແລະ ດຳເນີນທຸລະກຳເງິນຕາຕ່າງປະເທດ.

**ມາດຕາ 42 ຮູບການການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຢ່າງເປັນປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ, ບໍ່ໄດ້ແຈ້ງໃຫ້ຊາບລ່ວງໜ້າ.

ໃນການດຳເນີນການກວດກາວຽກງານເງິນຕາຕ່າງປະເທດ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

ໃນການກວດການັ້ນ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ມີສິດສອບຖາມ, ກວດກາເອກະສານ ກ່ຽວກັບການດຳເນີນທຸລະກິດເງິນຕາຕ່າງປະເທດ ເມື່ອເຫັນວ່າມີຄວາມຈຳເປັນ.

**ມາດຕາ 43 ສິດ ແລະ ໜ້າທີ່ ຂອງອົງການກວດກາວຽກງານເງິນຕາຕ່າງປະເທດ**

ອົງການກວດກາວຽກງານເງິນຕາຕ່າງປະເທດ ມີ ສິດ ແລະ ໜ້າທີ່ ກວດກາຕາມເນື້ອໃນທີ່ໄດ້ກຳນົດໄວ້ໃນມາດຕາ 41 ຂອງກົດໝາຍສະບັບນີ້ ໂດຍມີການປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ.

**ມາດຕາ 44 ການລາຍງານຜົນການກວດກາ**

ທະນາຄານທຸລະກິດ, ສະຖາບັນການເງິນອື່ນ, ຫົວໜ່ວຍທຸລະກິດທີ່ດຳເນີນທຸລະກິດເງິນຕາຕ່າງປະເທດ ຕ້ອງລາຍງານການດຳເນີນທຸລະກິດຂອງຕົນ ຕໍ່ທະນາຄານ ແຫ່ງ ສປປ ລາວ ຕາມລະບຽບການທີ່ວາງອອກໃນແຕ່ລະໄລຍະ.

ທະນາຄານ ແຫ່ງ ສປປ ລາວ ເກັບກຳ, ສັງລວມຜົນຂອງການກວດກາການຈັດຕັ້ງປະຕິບັດວຽກງານເງິນຕາຕ່າງປະເທດ ຂອງສະຖາບັນການເງິນອື່ນ, ບັນດາກະຊວງ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອສະຫຼຸບ ລາຍງານໃຫ້ລັດຖະບານ ຢ່າງເປັນປົກກະຕິ.

# ພາກທີ VIII
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

## ມາດຕາ 45 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

## ມາດຕາ 46 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນ ກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ທີ່ສ້າງຄວາມເສັຍຫາຍ ແກ່ລັດ ແລະ ສັງຄົມ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສັຍຫາຍທາງແພ່ງ ຫຼື ຮັບຜິດຊອບທາງອາຍາ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ.

## ມາດຕາ 47 ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ເປັນຄັ້ງທຳອິດ ມີລັກສະນະເບົາ ຈະຖືກສຶກສາອົບຮົມ, ກ່າວເຕືອນ ຈາກອົງການທີ່ກ່ຽວຂ້ອງ ພ້ອມທັງບັນທຶກເປັນລາຍລັກອັກສອນ.

## ມາດຕາ 48 ມາດຕະການທາງວິໄນ

ເຈົ້າໜ້າທີ່ ຫຼື ພະນັກງານຂອງລັດ ທີ່ລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນມາດຕາ 30 ຂອງກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນ ກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນຕາມແຕ່ລະກໍລະນີ ດັ່ງນີ້:

1. ກ່າວເຕືອນ ໂດຍບັນທຶກໄວ້ໃນສຳນວນເອກະສານຊີວະປະຫວັດຂອງຜູ້ກ່ຽວ;
2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;
3. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕ່ຳກວ່າ;
4. ໃຫ້ອອກຈາກການເປັນລັດຖະກອນ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ຜູ້ຖືກລົງວິໄນ ຕ້ອງມອບຊັບສິນທີ່ໄດ້ມາໂດຍບໍ່ຖືກຕ້ອງນັ້ນໃຫ້ແກ່ການຈັດຕັ້ງຢ່າງຄົບຖ້ວນ.

### ມາດຕາ 49 ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ຈະຖືກປັບໃໝຈາກເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ ດັ່ງນີ້:

1. ຕິດປະກາດ ຫຼື ໂຄສະນາ ລາຄາ ແລະ ຄ່າອື່ນ ໃນ ສປປ ລາວ ເປັນເງິນຕາຕ່າງປະເທດ ຈະຖືກປັບໃໝ ໜຶ່ງລ້ານ (1.000.000) ກີບ ຕໍ່ຄັ້ງ;

2. ຮັບຊໍາລະ ຫຼື ຊໍາລະຄ່າສິນຄ້າ, ຄ່າບໍລິການ, ຊໍາລະໜີ້, ເບີກຈ່າຍເງິນເດືອນ, ປະຕິບັດພັນທະຕໍ່ລັດ ເປັນເງິນຕາຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ສາມລ້ານ (3.000.000) ກີບ ຕໍ່ຄັ້ງ;

3. ດໍາເນີນທຸລະກິດເງິນຕາຕ່າງປະເທດ ຫຼື ແລກປ່ຽນເງິນຕາ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ສາມສິບລ້ານ (30.000.000) ກີບ;

4. ກໍານົດ, ຕິດປະກາດ ຫຼື ປະຕິບັດ ອັດຕາແລກປ່ຽນ ຂອງທະນາຄານທຸລະກິດ, ຮ້ານແລກປ່ຽນເງິນຕາ ຫຼື ສະຖານທີ່ບໍລິການທີ່ກ່ຽວຂ້ອງ ທີ່ບໍ່ຖືກຕ້ອງຕາມລະບຽບການ ຈະຖືກປັບໃໝ ຫ້າລ້ານ (5.000.000) ກີບ ຕໍ່ຄັ້ງ;

5. ເປີດບັນຊີເງິນຝາກຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານ ແຫ່ງ ສປປ ລາວ ຈະຖືກປັບໃໝ ຊາວລ້ານ (20.000.000) ກີບ;

6. ບໍ່ລາຍງານຕາມທີ່ໄດ້ກໍານົດໄວ້ໃນມາດຕາ 27 ຂອງກົດໝາຍສະບັບນີ້ ຫຼື ລາຍງານຂໍ້ມູນບໍ່ຖືກຕ້ອງຕາມຄວາມເປັນຈິງ ຈະຖືກປັບໃໝ ຫ້າລ້ານ (5.000.000) ກີບ ຕໍ່ຄັ້ງ;

7. ໃຫ້ກູ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ ຄັ້ງທີໜຶ່ງ ຈະຖືກປັບໃໝ ສູນຈຸດໜຶ່ງ ສ່ວນຮ້ອຍ (0,1%) ຂອງມູນຄ່າເງິນກູ້ ຫຼື ສິນເຊື່ອການຄ້າ;

8. ນໍາເງິນສົດເປັນເງິນຕາຕ່າງປະເທດ, ເງິນສົດເປັນເງິນກີບ ເຂົ້າ-ອອກ ສປປ ລາວ ທີ່ມີມູນຄ່າເກີນລະບຽບການ ໂດຍບໍ່ແຈ້ງຕໍ່ເຈົ້າໜ້າທີ່ພາສີປະຈໍາດ່ານ ຫຼື ບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ຄັ້ງທີໜຶ່ງ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່າທີ່ລະເມີດ.

ເມື່ອມີການລະເມີດຊໍ້າໃນແຕ່ລະກໍລະນີ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າປັບໃໝໃນຄັ້ງຫຼ້າສຸດ.

### ມາດຕາ 50 ມາດຕະການທາງແພ່ງ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງໄດ້ສ້າງຄວາມເສຍຫາຍແກ່ ລະບົບເສດຖະກິດ, ການເງິນ ແລະ ເງິນຕາ ຂອງ ສປປ ລາວ ແລະ ຜູ້ອື່ນ ຕ້ອງໄດ້ໃຊ້ແທນຄ່າເສຍຫາຍ ຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 51 ມາດຕະການທາງອາຍາ**

ບຸກຄົນ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງມີອົງປະກອບຂອງການກະທຳຜິດທາງອາຍາ ແລະ ສ້າງຄວາມເສຍຫາຍແກ່ລະບົບເສດຖະກິດ, ການເງິນ ແລະ ເງິນຕາ ຂອງ ສປປ ລາວ ຈະຖືກລົງໂທດ ຕາມກົດໝາຍອາຍາ ຫຼື ກົດໝາຍອື່ນທີ່ກຳນົດໂທດທາງອາຍາ.

**ມາດຕາ 52 ມາດຕະການທາງອາຍາຕໍ່ຜູ້ລະເມີດມາດຕະການປັບໃໝເປັນອາຈິນ**

ບຸກຄົນ ທີ່ລະເມີດມາດຕະການປັບໃໝເປັນອາຈິນ ຈະຖືວ່າເປັນການກະທຳຜິດທາງອາຍາ ແລະ ຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ແລະ ປັບໃໝ ແຕ່ ສາມລ້ານ (3.000.000) ກີບ ຫາ ສິບລ້ານ (10.000.000) ກີບ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 53 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດ ກົດໝາຍສະບັບນີ້.

**ມາດຕາ 54 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້